ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງໄຊຍະບູລີ

ອົງການພັດທະນາ ແລະ ບໍລິຫານຕົວເມືອງ

ເລກທີ 158/ອພບຕ.ຊຍ

ໄຊຍະບູລີ, ວັນທີ 2 ເມສາ 2026

# ໜັງສືເຊີນເຂົ້າຮ່ວມການປະມູນ

1. ອົງການພັດທະນາ ແລະ ບໍລິຫານຕົວເມືອງໄດ້ນຳໃຊ້ຮ່ວງເງິນແຜນງົບປະມານ ແລະ ການລົງທຶນປີ 2026 ເພື່ອເຊີນບັນດາ ບໍລິສັດທີ່ສົນໃຈ ເຂົ້າຮ່ວມການປະມູນໂຄງການ ອະນາໄມ ແລະ ລ້ວງຄອງນ້ຳ ເທດສະບານເມືອງໄຊຍະບູລີ ແມ່ນໃຫ້ສຳເລັດ ພາຍ ໃນ 45 ວັນ.

2. ການປະມູນນີ້ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ເອກະສານຄຳແນະນຳກ່ຽວ ກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

3. ຜູ້ປະມູນຕ້ອງມີສຳເນົາເອກະສານໃບອະນຸຍາດດຳເນີນທຸລະກິດ, ໃບທະບຽນວິສະຫະກິດທາງດ້ານການກໍ່ສ້າງ-ສ້ອມແປງເຄຫາສະຖານ ແລະໃບມອບພັນທະອາກອນປີ 2026 ຫລື 2025 ທີ່ຖືກຕ້ອງຕາມກົດໝາຍ

4. ບໍລິສັດໃດທີ່ສົນໃຈຂໍເຊີນຕິດຕໍ່ຂໍ້ມູນໄດ້ທີ່ຂະແໜງບໍລິຫານ, ແຜນການ ແລະ ການເງິນອົງການພັດທະນາ ແລະ ບໍລິຫານຕົວເມືອງ ຕາມໂມງລັດຖະການ ເລີ່ມແຕ່ວັນທີ 1/4/2026 ເຖິງວັນທີ 1/5/2026 ໃນລາຄາ **500,000** ກີບ/ຊອງ, ຈຳນວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ (ວິທີການຊຳລະຕ້ອງຈ່າຍເປັນເງິນສົດ).

5. ຊອງປະມູນໂຄງການ ອະນາໄມ ແລະ ລ້ວງຄອງນ້ຳ ເທດສະບານເມືອງໄຊຍະບູລີຈະຕ້ອງໄດ້ສົ່ງບໍ່ໃຫ້ ກາຍເວລາ 09:00 ໂມງ ຂອງວັນທີ 1/5/2026 ທີ່ ຂະແໜງບໍລິຫານ, ແຜນການ ແລະ ການເງິນອົງການພັດທະນາ ແລະ ບໍລິຫານຕົວເມືອງ, ຊອງປະມູນສົ່ງຊ້າກ່ວາເວລາທີ່ໄດ້ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍ ບໍ່ມີການເປີດຊອງ ແລະ ຈະດຳເນີນເປີດຊ່ອງໃນເວລາ 14:00 ໂມງ ຂອງວັນດຽວກັນໂດຍຊ້ອງໜ້າຄະນະກຳມະການ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນ.

6. ສອບຖາມຂໍ້ມູເພີ່ມເຕີມກະລຸນາຕິດຕໍ່ພົວພັນທ່ານ ໄຊຍະສິດ ສົມສີ ເບີໂທ 020 55190029, ຮອງຫົວໜ້າຂະແໜງ ເຕັກນິກ-ອອກແບບ ອົງການພັດທະນາ ແລະ ບໍລິຫານຕົວເມືອງ ຕາມທີ່ຢູ່ຂ້າງລຸ່ມນີ້:

ຊື່ສຳນັກງານ: ອົງການພັດທະນາ ແລະ ບໍລິຫານຕົວເມືອງ

ທີ່ຕັ້ງ: ບ້ານ ທ່ານາ, ເມືອງໄຊຍະບູລີ, ແຂວງໄຊຍະບູລີ

ເລກໂທລະສັບ: 074 211 441

ຫົວໜ້າອົງການ

ແຂວງ ໄຊຍະບູລີ
ອົງການພັດທະນາ
ບໍລິຫານຕົວເມືອງ
ເມືອງ ໄຊຍະບູລີ

ບົວແພງ ອິນທະວົງ

ສແກນດ້วย CamScanner